ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ

ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)

**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

0467

ເລກທີ........../ທລຍ

11 APR 2016

## ບົດສະຫຼຸບປະຈຳເດືອນ ມີນາ 2016
## ແລະ ແຜນວຽກເດືອນ ເມສາ 2016

ການຈັດຕັ້ງປະຕິບັດໂຄງການຍ່ອຍ ຕົກມາຮອດທ້າຍເດືອນ ມີນາ 2016 ແມ່ນໄດ້ມີຄວາມຄືບໜ້າຢ່າງເປັນຮູບປະທຳດັ່ງນີ້ຄື:

ວຽກງານທີ່ພົ້ນເດັ່ນຂອງ ທລຍ ປະຈຳເດືອນ ມີນາ 2016 ແມ່ນການສະຫລຸບສັງລວມການຈັດຕັ້ງປະຕິບັດວຽກງານຮອບວຽນ 13 ສົກປີ 2015-2016 ເຊິ່ງເປັນຮອບວຽນສຸດທ້າຍ ຂອງ ທລຍ ໄລຍະ ທີ 2 ຖືວ່າເປັນໄລຍະທ້າທາຍສົມຄວນ ເພາະທຽບໃສ່ສົກປີທີ່ຜ່ານມາເຫັນວ່າມີຈຳນວນໂຄງການທີ່ຫລາຍກວ່າ ເຊິ່ງມີປະມານ 507 ໂຄງການທີ່ໄດ້ສົ່ງຂໍອະນຸມັດຈາກຜູ້ໃຫ້ທຶນ ເຊິ່ງຕັ້ງຢູ່ຫຼາຍກວ່າ 400 ບ້ານ ໂດຍຄາດວ່າຈະມີຜູ້ໄດ້ຮັບຜົນປະໂຫຍດຫຼາຍກວ່າ 200,000 ຄົນ ເຊິ່ງຈະໄດ້ໃຊ້ງົບປະມານ 13 ລ້ານໂດລາສະຫະລັດ ເພື່ອຈັດຕັ້ງປະຕິບັດໂຄງການເຫຼົ່ານັ້ນ. ໃນຈຳນວນ 507 ໂຄງການ, ມີຈຳນວນ 110 ໂຄງການທີ່ໄດ້ຮັບທຶນສົມຈາກລັດຖະບານ. ທຸກໂຄງການແມ່ນຈະຕ້ອງຖືກຈັດຕັ້ງປະຕິບັດໃຫ້ສຳເລັດກ່ອນ ເດືອນກັນຍາ 2016 ແລະ ແຕ່ເດືອນຕຸລາ-ທັນວາ 2016 ແມ່ນໄລຍະຄ້ຳປະກັນ ແລະ ປິດໂຄງການ ທລຍ 2.

ຕາງໜ້າຈາກຫ້ອງການ ທລຍ ຍັງໄດ້ເຂົ້າຮ່ວມກັບບັນດາກະຊວງ ແລະ ຂະແໜງການຕ່າງໆໃນການລົງຕິດຕາມກວດກາການຈັດຕັ້ງປະຕິບັດ ໂຄງການສົມທົບທຶນລັດຖະບານ ໃສ່ກອງທຶນຫຼຸດຜ່ອນຄວາມທຸກຍາກໃນຮອບວຽນ 12 ແລະ ຕິດຕາມກວດກາ ໂຄງການທີ່ກຳລັງຈັດຕັ້ງປະຕິບັດໃນຮອບວຽນ 13 ສົກປີ 2015-2016. ການເຄື່ອນໄຫວແມ່ນຍັງໄດ້ຕິດຕາມຄືນຜົນໄດ້ຮັບຂອງຊຸມຊົນພາຍຫຼັງທີ່ໄດ້ມີການມອບຮັບໂຄງການ ແລະ ຮັບຟັງການລາຍງາຍຈາກອຳນາດການປົກຄອງບ້ານ ແລະ ກຸ່ມບ້ານກ່ຽວກັບສະພາບການຈັດຕັ້ງປະຕິບັດໂຄງການພາຍຫຼັງທີ່ໄດ້ມອບຮັບໄປແລ້ວ ແລະ ຂໍ້ສະເໜີຂໍທຶນຮອບຕ່າງໆຂອງພໍ່ແມ່ປະຊາຊົນ.

ສຳລັບການກະກຽມ ທລຍ 3 ແມ່ນໄດ້ດຳເນີນໄປຢ່າງເປັນລະບົບ ແມ່ນການສືບຕໍ່ຈາກວຽກງານ ທລຍ ໄລຍະ 2 ເປັນ ຕົ້ນແມ່ນການປັບປຸງພື້ນຖານໂຄງລ່າງ ແລະ ການເຂົ້າເຖິງການບໍລິການສຳລັບຊຸມຊົນທີ່ທຸກຍາກ ຜ່ານຂະບວນການມີສ່ວນຮ່ວມຂອງຊຸມຊົນ ແລະ ການພັດທະນາຂອງທ້ອງຖິ່ນ ໂດຍເນັ້ນໃສ່ຄວາມຍືນຍົງຂອງໂຄງການເປັນຫລັກ. ອີງຕາມຮ່າງໜັງສືສັນຍາເບື້ອງຕົ້ນ ແມ່ນຈະໄດ້ທຶນຈາກສາກົນຈຳນວນ 46 ລ້ານໂດລາສະຫະລັດ

(30 ລ້ານ ຈາກທະນາຄານໂລກ ແລະ 16 ລ້ານຈາກສະວິດເຊີແລນ). ເພື່ອຮັບປະກັນ ການຄວບ ຄຸມດ້ານ ເນື້ອທີ່ ແລະ ກິດຈະກຳ, ມີຄວາມຈຳເປັນທີ່ລັດຖະບານຕ້ອງໄດ້ມີທຶນສົມທົບ ເປັນຢ່າງນ້ອຍ 10 ລ້ານໂດລາ ຄືກັບ ການຈັດຕັ້ງປະຕິບັດວຽກງານ ທລຍ 2. ສຳລັບຂອບເຂດຂອງການຈັດຕັ້ງປະຕິບັດ ແມ່ນກຳລັງກະກຽມໂດຍຈະອີງໃສ່ລະດັບຄວາມທຸກຍາກຂອງແຕ່ລະເມືອງ ແລະ ກຸ່ມບ້ານຕາມຄວາມເໝາະສົມທີ່ສຸດ. ການເຈລະຈາລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນກ່ຽວກັບ ທລຍ 3 ຄາດວ່າຈະຈັດຂຶ້ນໃນອາທິດທີ 3 ຂອງເດືອນເມສານີ້. ຈຸດປະສົງຂອງການເຈລະຈາປະກອບມີ: 1) ຮ່າງການສັນຍາການເງິນລະຫວ່າງ ລັດຖະບານ ແລະ ຜູ້ໃຫ້ທຶນ; 2) ຮ່າງສັນຍາໂຄງການລະຫວ່າງ ທລຍ ແລະ ຜູ້ໃຫ້ທຶນ, 3)ຮ່າງຄູ່ມືການປະເມີນໂຄງການ (Draft Project Appraisal Document or PAD); 4) ຮ່າງໜັງສືການເບີກຈ່າຍງົບປະມານ ແລະ 5) ຮ່າງແຜນ 18 ເດືອນ ຂອງວຽກງານການຈັດຊື້ຈັດຈ້າງ.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 *ຮອບວຽນ 12 (ສົກປີ 2014-2015)*

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 420 ໂຄງການເທົ່າກັບ 96%, ຄວາມຄືບໜ້າຫລາຍກວ່າ 50% ມີ 16 ໂຄງການ, ໜ້ອຍກວ່າ 50% ມີ 2 ໂຄງການ ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

**ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 58 | 1 | 0 | 0 |
| ສາລະວັນ | 31 | 23 | 8 | 0 | 0 |
| ຊຽງຂວາງ | 42 | 42 | 0 | 0 | 0 |
| ຜົ້ງສາລີ | 25 | 22 | 2 | 1 | 0 |
| ຫລວງນ້ຳທາ | 21 | 21 | 0 | 0 | 0 |
| ຫົວພັນ | 124 | 124 | 0 | 0 | 0 |
| ຫຼວງພະບາງ | 48 | 45 | 3 | 0 | 0 |
| ອຸດົມໄຊ | 50 | 48 | 1 | 1 | 0 |
| ອັດຕະປື | 18 | 17 | 1 | 0 | 0 |
| ເຊກອງ | 20 | 20 | 0 | 0 | 0 |
| ລວມ | **438** | **420** | **16** | **2** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມີນາ 2016*

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 40 | 1 | 0 | 0 |
| ຄົມມະນາຄົມ | 75 | 73 | 2 | 0 | 0 |
| ສາທາລະນະສຸກ | 25 | 25 | 0 | 0 | 0 |
| ສຶກສາ | 165 | 154 | 9 | 2 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 130 | 127 | 3 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 2 | 1 | 1 | 0 | 0 |
| ລວມ | **438** | **420** | **16** | **2** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມີນາ 2016*

ຕາຕະລາງ 3. ທຶນສົມທົບລັດຖະບານຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 15 | 15 | 0 | 0 | 0 |
| ສາລະວັນ | 12 | 8 | 4 | 0 | 0 |
| ຊຽງຂວາງ | 13 | 13 | 0 | 0 | 0 |
| ຫົວພັນ | 21 | 21 | 0 | 0 | 0 |
| ອັດຕະປື | 10 | 9 | 0 | 1 | 0 |
| ເຊກອງ | 3 | 3 | 0 | 0 | 0 |
| ລວມ | **74** | **69** | **4** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມີນາ 2016*

ຕາຕະລາງ 4. ທຶນສົມທົບລັດຖະບານຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 15 | 15 | 0 | 0 | 0 |
| ຄົມມະນາຄົມ | 12 | 8 | 4 | 0 | 0 |
| ສາທາລະນະສຸກ | 13 | 13 | 0 | 0 | 0 |
| ສຶກສາ | 21 | 21 | 0 | 0 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 10 | 9 | 0 | 1 | 0 |
| ພະລັງງານ ແລະ ບໍ່ແຮ່ | 3 | 3 | 0 | 0 | 0 |
| ລວມ | **74** | **69** | **4** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມີນາ 2016*

### 1.2. ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກັນຍາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 330 ໂຄງການ (99%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ຈຳນວນທີ່ຍັງເຫຼືອ 3 ໂຄງການ ທັງໝົດແມ່ນມີຄວາມຄືບໜ້າຫລາຍກວ່າ 50% ຄາດວ່າຈະສຳເລັດໃນມໍ່ໆ ນີ້.

ຈາກຕາຕະລາງຂ້າງລຸ່ມນີ້ 3 ໂຄງການທີ່ບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 5. ໂຄງການທີ່ຫຼ້າຊ້າໃນຮອບວຽນ 11

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສົມບູນ | ພູຍາງ | 95 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ນາແລ | ພູຫຼວງ | ພູຫຼວງມີກຈິງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ລອງ | ບອກບໍ່ (ຈ່າໃໝ່ ) | ແສນຈຸມປ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມີນາ 2016*

ສາຍເຫດຂອງການລ່າຊ້າສ່ວນໃຫຍ່ເກີດຈາກຂັ້ນຕອນການຈັດຕັ້ງປະຕິບັດຂອງຜູ້ຮັບເໝົາ ເນື່ອງຈາກພື້ນທີ່ສ່ວນໃຫຍ່ຢູ່ຫ່າງໄກຊອກຫຼີກ ເຮັດໃຫ້ການສົ່ງວັດສະດຸຫຼ້າຊ້າ ແລະ ບາງໂຄງການແມ່ນມີຄວາມຈຳເປັນທີ່ຈະຕ້ອງນຳເຂົ້າວັດສະດຸຈາກຕ່າງປະເທດເຮັດໃຫ້ເກີດຄວາມຊັກຊ້າ ເຮັດໃຫ້ເກີດຄວາມຊັກຊ້າເນື່ອງຈາກຈະຕ້ອງໄດ້ກວດວັດສະດຸຢ່າງເຂັ້ມງວດກ່ອນນຳເຂົ້າ.

## 2. ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ມີນາ 2016 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 100% ເທົ່າກັບ 61,114,300,917 ກີບ, ຮອບວຽນ 10 ເບີກຈ່າຍໄປແລ້ວ 79,093,371,331 ກີບ ເທົ່າກັບ 99.9% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ 77,145,359,121 ກີບ ຫລື ເທົ່າກັບ 99.6% ຂອງງົບປະມານທັງໝົດ ແລະ ສຳລັບຮອບວຽນ 12 ງົບປະມານທັງໝົດ 83,162,950,975 ກີບ ເບີກຈ່າຍໄປແລ້ວ 77,291,607,717 ກີບ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2016)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 61,114,300,917 | 0 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 79,093,371,331 | 31,879,971 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 330 | 77,145,359,121 | 302,465,446 |
| ຮອບວຽນ 12 (2014-2015) | 438 | 83,162,950,976 | 420 | 77,291,607,717 | 5,871,343,258 |
| ລວມ | **1,426** | 300,850,327,762 | **1,403** | 294,644,639,086 | 6,205,688,675 |
| ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016) | | | | | |
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ | |
| ຮອບວຽນ 13 (ສົກປີ 2015-2016) | 507[1] | 13[2] ລ້ານໂດລາສະຫະລັດ | - | (ຍັງບໍ່ໄດ້ເບີກຈ່າຍ) ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງ ແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນ ລະຫວ່າງເດືອນ ຕຸລາ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ. | |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມີນາ 2016*

## 3. ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ

- **ວຽກງານພັດທະນາຊຸມຊົນ**

- ຈັດກອງປະຊຸມປຶກສາຫາລືການປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ. ກອງປະຊຸມແມ່ນປຶກສາຫາລື ວຽກງານປ້ອງກັນຜົນກະທົບທາງດ້ານສັງຄົມໂດຍອີງໃສ່ກ່ຽວກັບກອບນະໂຍບາຍທາງດ້ານຊົນເຜົ່າ ແລະ ກອບນະໂຍບາຍການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ.
- ຝຶກອົບຮົມການເປັນຄູຝຶກກ່ຽວການວາງແຜນພັດທະນາແບບມີສ່ວນຮ່ວມຂັ້ນທ້ອງຖິ່ນ (ການວາງແຜນພັດທະນາຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ຮູບແບບ CDD).
- ໄດ້ປັບປຸງຄືນ ແຜນການເຄື່ອນໄຫວວຽກງານສົ່ງເສີມສິດສະເໝີພາບຍິງ-ຊາຍ.

---

[1] ແມ່ນຕົວເລກວາງແຜນຂັ້ນເມືອງ ອາດຈະມີການປ່ຽນແປງຫຼັງຈາກສຳຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

[2] ງົບປະມານອາດຈະມີການປ່ຽນແປງຫຼັງຈາກສຳຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

- ຝຶກອົບຮົມກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ ໃຫ້ແກ່ຄະນະໄກ່ເກ່ຍຂັ້ນບ້ານ ຢູ່ແຂວງສະຫວັນນະເຂດ.
- ຕິດຕາມຊຸກຍູ້ ການກະຈາຍຂໍ້ມູນຂ່າວສານຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນຊຸມຊົນເປັນປົກກະຕິເຜີຍແຜ່ຂໍ້ມູນຂ່າວສານຜ່ານກະດານຂ່າວກຸ່ມບ້ານ.
- ສຳເລັດການເຜີຍແຜ່ຂໍ້ມູນ-ຂ່າວສານຜ່ານວິທະຍຸແຫ່ງຊາດ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ.
- ສຳເລັດການຜະລິດຄູ່ມື ນະໂຍບາຍດ້ານຊົນເຜົ່າ ພາລາວ-ອັງກິດ, ນະໂຍບາຍການຍົກຍ້າຍຖິ່ນຖານ ແລະ ທົດແທນຄືນ ພາສາລາວ-ອັງກິດ, ນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມ ພາສາລາວ-ອັງກິດ, ປື້ມລາຍງານການປະເມີນຄວາມຍືນຍົງຂອງໂຄງການຍ່ອຍ ທລຍ (ພາສາລາວ-ອັງກິດ), ບົດລາຍງານປະຈຳປີ 2015 ຂອງ ທລຍ 2, ປື້ມຜົນງານ 13 ປີຂອງ ທລຍ, ຮູບພາບແຜ່ນໃຫຍ່ (Roller), ແຜ່ນສາກວາງສະແດງ (Booth screen) ພ້ອມທັງແຈກຢາຍໃຫ້ກຸ່ມເປົ້າໝາຍຕາມແຜນທີ່ວາງໄວ້.

- <u>ວຽກງານວິສະວະກຳ ແລະ ວິຊາການ</u>

- ລົງກວດກາໂຄງການຍ່ອຍ ທຶນສົບທົບລັດຖະບານ ຮອບວຽນທີ 12 ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ ຢູ່ແຂວງຫົວພັນ, ຊຽງຂວາງ, ອັດຕະປື, ເຊກອງ, ສາລະວັນ ແລະ ສະຫວັນນະເຂດ.
- ປະກອບສ່ວນໃນການກະກຽມໜັງສືຂໍອະນຸມັດໂຄງການຍ່ອຍ ຮອບວຽນ 13 ທຶນສາກົນ.
- ຕິດຕາມນັກສຶກສາ ປີສຸດທ້າຍທີ່ເຂົ້າຮ່ວມກວດກາໂຄງການຍ່ອຍ ຢູ່ແຂວງສາລະວັນ ແລະ ເຊກອງ.
- ກວດກາເອກະສານດ້ານສະພາບແວດລ້ອມ ແລະ ໂຄງການຍ່ອຍ ທີ່ພົວພັນກັບປ່າສະຫງວນ ຢູ່ເມືອງວຽງທອງ, ແຂວງຫົວພັນ ຮ່ວມກັບຊ່ຽວຊານຈາກທະນາຄານໂລກ.
- ປັບປຸງແບບມາດຖານການກໍ່ສ້າງ ແລະ ແບບຟອມເກັບກຳຂໍ້ມູນດ້ານປະລິມານ ໃຫ້ເປັນເອກະພາບກັນ ໃນການນຳໃຊ້ເຂົ້າໃນໂຄງການຍ່ອຍ ຮອບວຽນທີ 13.
- ກະກຽມ ແລະ ຂຶ້ນແຜນງົບປະມານ ໃນການລົງກວດກາ ແລະ ຕິດຕາມໂຄງການຍ່ອຍຊຸມຊົນຈັດຕັ້ງປະຕິບັດ ດ້ານສຸຂະອະນາໄມ ຢູ່ 4 ແຂວງພາກໃຕ້.
- ສຳເລັດການລົງກະຕຸ້ນ ຊຸມຊົນພາຍໃຕ້ວຽກງານຊຸມຊົນເປັນເຈົ້າການດ້ານສຸຂະນາໄມ (ຊຈສ) ຢູ່ 4 ເມືອງ ຄື: ເຊໂປນ ແລະ ນອງ ແຂວງສະຫວັນນະເຂດ; ລະມາມ ແຂວງເຊກອງ ແລະ ຕະໂອ້ຍ ແຂວງສາລະວັນ ປະຈຸບັນແມ່ນຢູ່ໃນຂັ້ນຕອນການຕິດຕາມການກໍ່ສ້າງວິດຖ່າຍ.
- ຈັດກອງປະຊຸມດ້ານວິຊາການ ກ່ຽວກັບ ວຽກງານປົກປ້ອງທາດ້ານສິ່ງແວດລ້ອມ ແລະ ສັງຄົມ ຢູ່ ແຂວງຫລວງພະບາງ (6 ແຂວງພາກເໜືອເຂົ້າຮ່ວມ: ຜົ້ງສາລີ, ອຸດົມໄຊ, ຫລວງນໍ້າທາ, ຫລວງພະບາງ, ຫົວພັນ ແລະ ຊຽງຂວາງ) ແລະ ຈັດຢູ່ແຂວງຈຳປາສັກ (4 ແຂວງພາກໃຕ້ເຂົ້າຮ່ວມ: ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື) ໃນວັນທີ 9-10 ມີນາ 2016.

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ໄດ້ສະຫລຸບສັງລວມຄວາມຄືບໜ້າຂອງຮອບວຽນ 13 ຫລັງຈາກການຂໍອະນຸມັດໃນການຈັດຕັ້ງປະຕິບັດຈາກຜູ້ໃຫ້ທຶນ.
- ຕາງໜ້າຈາກພະແນກຍັງໄດ້ເຂົ້າຮ່ວມກັບ ບັນດາກະຊວງ ແລະ ຂະແໜງການຕ່າງໆໃນການຕິດຕາມໂຄງການພາຍໃຕ້ທຶນສົມທົບລັດຖະບານ.
- ໄດ້ຕິດຕາມບັນດາໂຄງການທີ່ລ່າຊ້າໃນຮອບວຽນທີ່ຜ່ານມາ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ສຳເລັດທັນຕາມຄາດໝາຍ ກ່ອນການສິ້ນສຸດລົງຂອງໂຄງການໄລຍະທີ 2.
- ກະກຽມໜັງສືສະເໜີ ຂໍອະນຸມັດການຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຕິດຕາມ ແລະ ປະເມີນຜົນຂັ້ນສູນກາງ ກ່ຽວກັບລະບົບໂດຍຊ່ຽວຊານຈາກຕ່າງປະເທດ.
- ໄດ້ປະກອບສ່ວນໃນການກະກຽມ ທລຍ ໄລຍະທີ 3 ໂດຍການປະກອບຄໍາຄິດເຫັນໃນການອອກແບບ, ສະໜອງຂໍ້ມູນ ແລະ ອອກແບບລະບົບຖານຂໍ້ມູນ.

- <u>ວຽກງານບໍລິຫານ - ການເງິນ</u>

- ສຳເລັດກະກຽມບົດລາຍການເງິນປະຈຳເດືອນ ກຸມພາ 2016.
- ໄດ້ສົ່ງເອກະສານຄ່ຽນເງິນປະຈຳເດືອນທັນວາ 2015 ບ້ວງເງິນ IDA 56770 ໃຫ້ກະຊວງການເງິນ.
- ສຳເລັດຄ່ຽນເງິນບໍລິການນຳຄັງເງິນແຫ່ງຊາດສຳລັບ ເດືອນ ມັງກອນ ແລະ ກຸມພາ 2016, ເປັນມູນຄ່າ 735,000 ໂດລາ.
- ສຳເລັດ ແລະ ໄດ້ຮັບເງິນລ່ວງໜ້ານຳທະນາຄານໂລກສຳລັບ ທຶນກູ້ຢືມເລກທີ IDA 56770, ຈຳນວນ 2,500,000 ໂດລາ.
- ສຳເລັດການລົງເຮັດວຽກຮ່ວມກັບຂະແໜງການກ່ຽວຂ້ອງ, ເພື່ອກວດກາໂຄງການຍ່ອຍທີ່ຈັດຕັ້ງປະຕິບັດພາຍໃຕ້ທຶນສົມທົບລັດທະບານສຳລັບຮອບວຽນ 12, ໃນ 6 ແຂວງ (ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື).

- <u>ວຽກງານຈັດຕັ້ງ</u>

- ສຳເລັດການອອກສັນຍາໃຫ້ພະນັກງານແຂວງອຸດົມໄຊ, ເຊກອງ ແລະ ອັດຕະປື.
- ສຳເລັດການອອກໜັງສືເຕືອນ ແລະ ແນະນຳການປະຕິບັດວຽກໃຫ້ພະນັກງານ ທີ່ມີຜົນການຈັດຕັ້ງປະຕິບັດວຽກປະຈຳປີ ບໍ່ໄດ້ຕາມລະດັບຄາດໝາຍຂອງໂຄງການ.
- ໄດ້ເຂົ້າຮ່ວມກອງປະຊຸມ ສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກຂອງ ທລຍ ຮອບວຽນ 12 ຢູ່ ທລຍ ແຂວງເຊກອງ ໃນລະຫວ່າງວັນທີ 22-25 ເມສາ 2016.

- ສຳເລັດການປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຕຳແໜ່ງປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການຂັ້ນເມືອງ.
- ປັບປຸງໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດໜ້າທີ່ຮັບຜິດຊອບຂອງພະນັກງານ ສຳລັບ ທລຍ ໄລຍະ 3: ອີງຕາມການຕົກລົງກັບຜູ້ໃຫ້ທຶນ ໃນຄັ້ງວັນທີ 06/04/2016, ທະນາຄານໂລກຈະວ່າຈ້າງຊ່ຽວຊານສະເພາະດ້ານ ມາດຳເນີນວຽກດັ່ງກ່າວ ຮ່ວມກັບ ທລຍ ໃນອີກ 02 ເດືອນຕໍ່ໜ້າ.
- ສຳເລັດການປະກາດຮັບສະໝັກ ແລະ ຄັດເລືອກພະນັກງານບໍລິຫານ-ການເງິນ ປະຈຳ ທລຍ ແຂວງອັດຕະປື.

▪ <u>ວຽກງານຈັດຊື້-ຈັດຈ້າງ</u>

- ສຳເລັດການດຳເນີນຂັ້ນຕອນການກະກຽມບົດລາຍງານປະເມີນຜົນ, ຕັດສິນ ແລະ ເຊັນສັນຍາກ່ຽວກັບເຄື່ອງມືກະຈາຍ ຂໍ້ມູນຂ່າວສານສຶກສາ ແລະ ປະຊາສຳພັນ (IEC) ຂອງ ທລຍ II.
- ເຂົ້າຮ່ວມກອງປະຊຸມວຽກງານປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ.
- ສະເໜີຂໍອະນຸມັດແປ ເອກະສານ ວຽກງານປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ (ESMF) ໃຫ້ພະແນກວິສະວະກຳ.
- ກຽມຂໍ້ມູນກ່ຽວກັບການເປີດຊອງປະມູນ ຢູ່ຂັ້ນເມືອງ ໂຄງການຍ່ອຍ ຮອບວຽນທີ 13 ທຶນສາກົນ ສົ່ງໃຫ້ທະນາຄານໂລກ.
- ຮ່າງແຈ້ງການຫາແຂວງ ກ່ຽວກັບການເປີດຊອງປະມູນຢູ່ຂັ້ນເມືອງ ສຳລັບໂຄງການຍ່ອຍ ຮອບວຽນ 13.
- ສຳເລັດການເຂົ້າຮ່ວມຝຶກອົບຮົມວຽກງານຈັດຊື້ ຂອງທະນາຄານໂລກ, ຕ່າງແຂວງເຂົ້າຮ່ວມນຳ, ຢູ່ໂຮງແຮມ Mecure.
- ເຂົ້າຮ່ວມການມອບຮັບໂຄງການຂົວ ຢູ່ບ້ານ ນ້ຳກໍ້, ເມືອງ ຈອມເພັດ, ແຂວງ ຫລວງພະບາງ.
- ກວດກາງົບປະມານເປີດຊອງປະມູນ ແລະ ສະເໜີຂໍເບີກຈ່າຍເງິນບ້ວງເງິນຂອງທະນາຄານໂລກ ແລະ ລັດຖະບານໃຫ້ ທລຍ ແຂວງຫລວງພະບາງ, ແຂວງຫົວພັນ.
- ກວດກາງົບປະມານເປີດຊອງປະມູນ ແລະ ສະເໜີຂໍເບີກຈ່າຍເງິນໃຫ້ ທລຍ ແຂວງ ອັດຕະປື ແລະ ສາລະວັນ.

▪ <u>ວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ</u>

- ການທ້ອນເງິນໃນເດືອນ ມີນາ 2016 ໃນ 7 ເມືອງ ຄື ເມືອງຮ້ຽມ, ເມືອງຊ່ອນ,ເມືອງ ຫົວເມືອງ ແລະ ເມືອງຊຽງຄໍ້ (ແຂວງຫົວພັນ) ; ເມືອງ ເຊໂປນ ແລະ ເມືອງນອງ ແລະ ເມືອງທ່າປາງທອງ (ແຂວງສະຫັວນນະເຂດ). ລວມທັງໝົດ ມີ: 165 ບ້ານ, 696 ກຸ່ມ, ສະມາຊິກທັງໝົດມີ 8,103 ຄົນ,ຍິງມີ 7,005 ຄົນ, ເງິນຝາກທັງໝົດໃນເດືອນ ມີນາ 2016 ນີ້ ມີ: 41.254,000 ກີບ ແລະ ລວມຍົກຍອດມາທັງໝົດມີ : 432.799,000 ກີບ.
- ການສ້າງລາຍຮັບທັງໝົດ ແມ່ນໄດ້ຈາກກິດຈະກຳຕ່າງໆ ເຊັ່ນ: ການລ້ຽງໄກ່, ການລ້ຽງປາ ,ການຕຳຫູກ, ການລ້ຽງໝູ, ລ້ຽງແບ້ ແລະ ອື່ນໆ. ການສ້າງລາຍຮັບໃນເດືອນນີ້ແມ່ນໄດ້ສູງພໍສົມຄວນເພາະເຂົາເຈົ້າໄດ້ລ້ຽງໃນລະດູຝົນ

ແລະ ໄດ້ຈຳໜ່າຍອອກໃນລະດູແລ້ງ. ສະນັ້ນລາຍຮັບຈຶ່ງສູງພໍສົມຄວນ . ສ່ວນເດືອນ ມີນາ 2016 ສ້າງລາຍຮັບໄດ້ທັງໝົດມີ 3,452,521,000 ກີບ.

- ວຽກງານດ້ານໂພຊະນາການໃນ 1 ເດືອນຜ່ານມາໄດ້ມີການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວເປັນປົກກະຕິຢູ່ແຕ່ລະສະໂມສອນໂພຊະນາການຂອງແຕ່ລະເມືອງໂດຍນຳໃຊ້ງົບປະມານທີ່ຍັງເຫລືອຢູ່ແຕ່ລະສະໂມສອນ ຍອັນວ່າງົບປະມານມີພຽງພໍສຳລັບການເຄື່ອນໄຫວວຽກງານດັ່ງກ່າວໄດ້ສະດວກສະບາຍ. ວຽກທີ່ປະຕິບັດໃນເດືອນນີ້ມີຢູ່ 4 ກິດຈະກຳຫລັກເຊັ່ນ: 1) ການປຸງແຕ່ງອາຫານກາງເວັນ; 2) ໂພຊະນາສຶກສາ; 3) ໂພຊະນາການ ແມ່ ແລະ ເດັກ; 4) ກິດຈະກຳສວນຄົວ.

## 4. ແຜນວຽກສຳລັບເດືອນ ເມສາ 2016

- **ວຽກງານພັດທະນາຊຸມຊົນ**

- ຕິດຕາມການຝຶກອົບຮົມການສ້າງຄູຝຶກວິທີການວາງແຜນພັດທະນາຂັ້ນບ້ານ ແລະ ກຸ່ມບ້ານໃຫ້ພະນັກງານຂັ້ນແຂວງ, ເມືອງ ແລະ ກຸ່ມບ້ານ (ຮູບແບບການພັດທະນາທີ່ຈັດຕັ້ງໂດຍຊຸມຊົນຢ່າງເຕັມຮູບແບບ CDD) ຢູ່ແຂວງຫົວພັນ, ອຸດົມໄຊ, ຫລວງພະບາງ ແລະ ສະຫວັນນະເຂດ).
- ປຶກສາຫາລືກັບກ່ຽວກັບການປັບປຸງກົນໄກສະແດງຄຳຄິດຄຳເຫັນ ກັບພະແນກຕິດຕາມປະເມີນຜົນ.
- ຕິດຕາມຊຸກຍູ້ໃນການຜະລິດເຄື່ອງມືກະຈາຍຂໍ້ມູນ-ຂ່າວສານກິດຈະກຳປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ (LN) ເພື່ອຮັບໃຊ້ຢູ່ໃນ 165 ບ້ານ ພ້ອມທັງແຈກຢາຍຕາມແຜນທີ່ວາງໄວ້ໃນເບື້ອງຕົ້ນ.
- ຂຽນຂ່າວ ແລະ ດັດແກ້ຂ່າວທີ່ ໄດ້ຮັບຈາກຕ່າງແຂວງ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງ ການຍ່ອຍຂອງ ທລຍ ຮອບວຽນທີ 12 ແລະ ການກະກຽມການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນທີ 13 ຢ່າງໜ້ອຍໃຫ້ໄດ້ 5 ບົດຂ່າວ.
- ສືບຕໍ່ກະກຽມຂຽນບົດສະເໜີ ແລະ ຂຽນເນື້ອໃນ ສາລະຄະດີ ຜົນງານ 13 ປີ ຂອງ ທລຍ.
- ສືບຕໍ່ກະກຽມ ແລະ ນຳພານັກຂ່າວ ຈາກ ສະຫະພັນແມ່ຍິງ, ລາຍການວິທະຍຸແຫ່ງຊາດ ແລະ ຕາງໜ້າ ໜັງສື ຈຳນວນໜຶ່ງ ລົງເກັບກຳຂ່າວຢູ່ແຂວງຫົວພັນ.
- ຕິດຕາມຊຸກຍູ້ ການກະຈາຍຂໍ້ມູນຂ່າວສານຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນຊຸມຊົນເປັນປົກກະຕິ.

- **ວຽກງານວິສະວະກຳ**

- ເຂົ້າຮ່ວມການສຳມະນາການຄຸ້ມຄອງເສັ້ນທາງໂດຍຊຸມຊົນ (Gender Involvement) ຢູ່ປະເທດ ສສ ຫວຽດນາມ.
- ສືບຕໍ່ຕິດຕາມການຂໍອະນຸມັດ ການຈັດຕັ້ງປະຕິບັດໂຄງການຍ່ອຍ ຮອບວຽນທີ 13 ຈາກຜູ້ໃຫ້ທຶນ.
- ສືບຕໍ່ສັງລວມບົດລາຍງານ ຄວາມຄືບໜ້າວຽກງານຊຸມຊົນເປັນເຈົ້າການດ້ານສຸຂະນາໄມ (ຊຈສ).
- ສືບຕໍ່ລົງກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍ ຮູບແບບ CDD ຢູ່ 3 ແຂວງ: ອຸດົມໄຊ, ຫລວງພະບາງ ແລະ ສະຫວັນນະເຂດ.

- ວຽກງານຕິດຕາມ-ປະເມີນຜົນ

- ສືບຕໍ່ສະໜອງຂໍ້ມູນໃຫ້ຜູ້ໃຫ້ທຶນກ່ຽວກັບໂຄງການຮອບວຽນທີ 13 ແລະ ຂໍ້ມູນອື່ນໆທີ່ຈຳເປັນໃນການກະກຽມໂຄງການ ທລຍ ໄລຍະທີ III.
- ສືບຕໍ່ຕິດຕາມຜົນໄດ້ຮັບຂອງການປະເມີນຜົນກະທົບໄລຍະທ້າຍໂຄງການ (Endline Survey) ຂອງ ທລຍ ໄລຍະທີ II.
- ກະກຽມການຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຕິດຕາມ-ປະເມີນຜົນ ຂັ້ນສູນກາງ ແລະ ອອກແບບ ແລະ ສ້າງລະບົບຖານຂໍ້ມູນໃໝ່ຂອງ ໂຄງການ ທລຍ ໄລຍະທີ III.
- ກະກຽມບົດລາຍງານ ຫົກເດືອນຕົ້ນປີ ສະບັບພາສາລາວ ແລະ ພາສາອັງກິດ ເພື່ອລາຍງານໃຫ້ແກ່ລັດຖະບານ ແລະ ຜູ້ໃຫ້ທຶນ.
- ສືບຕໍ່ຕິດຕາມການອະນຸມັດການຈັດຕັ້ງປະຕິບັດໂຄງການຮອບວຽນ 13 ຈາກຜູ້ໃຫ້ທຶນ ເພື່ອດຳເນີນການຈັດຊື້-ຈັດຈ້າງ ແລະ ຈັດຕັ້ງປະຕິບັດໃຫ້ທັນເວລາ.

- ວຽກງານບໍລິຫານ-ການເງິນ

- ກະກຽມບົດລາຍການເງິນປະຈຳເດືອນ ມີນາ 2016.
- ກະກຽມຄ່ຽນເງິນໂຄງການຍ່ອຍຮອບວຽນ 12, ສຳລັບແຂວງຜົ້ງສາລີ ປະມານ 472,000 ໂດລາ, ຈາກຄັງເງິນແຫ່ງຊາດ.
- ກະກຽມຄ່ຽນເງິນບໍລິການນຳທະນາຄານໂລກສຳລັບ ເດືອນ ມັງກອນ ແລະ ກຸມພາ 2016, ເປັນມູນຄ່າ 2,698,000 ໂດລາ.
- ກະກຽມບົດລາຍງານການເງິນປະຈຳໄຕມາດ ມັງກອນ - ມີນາ 2016.
- ສືບຕໍ່ກະກຽມແຜນງົບປະມານ ສຳລັບໂຄງການ ທລຍ ໄລຍະ III, ເພື່ອນຳສະເໜີໃຫ້ຜູ້ໃຫ້ທຶນ, ໂດຍສະເພາະດ້ານທຶນສົມທົບຈາກລັດຖະບານ.

- ວຽກງານຈັດຕັ້ງ

- ສືບຕໍ່ປະກາດຮັບສະໝັກ ຕຳແໜ່ງວິສະວະກອນໄລຍະສັ້ນ ຢູ່ ແຂວງ ສະຫວັນນະເຂດ 04 ຕຳແໜ່ງ ແລະ ຫລວງພະບາງ 02 ຕຳແໜ່ງ.
- ປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງບໍລິຫານ-ການເງິນ ປະຈຳເມືອງສະໜາມໄຊ, ແຂວງອັດຕະປື.
- ປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງວິສະວະກອນເມືອງວຽງໄຊ, ແຂວງຫົວພັນ.
- ປະກາດຮັບສະໝັກ ແລະ ຄັດເລືອກຊ່ຽວຊານດ້ານສິນເຊື່ອຈຸນລະພາກ ໄລຍະສັ້ນ ປະຈຳ ທລຍ ສູນກາງ.
- ສັງລວມບົດປະເມີນຜົນງານ ປະຈຳປີຂອງພະນັກງານ ຕາມການແນະນຳຈາກຄະນະພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ຂັ້ນສູນກາງ.

- <u>ວຽກງານຈັດຊື້-ຈັດຈ້າງ</u>

- ກະກຽມແຜນຈັດຊື້ໂຄງການຍ່ອຍບ້ວງທຶນຂອງທະນາຄານໂລກ ສົກປີ 2015-2016.
- ກະກຽມການເປີດຊອງປະມູນເຄື່ອງມື IEC ຂອງກິດຈະກຳ ປັບປຸງຊີວິດການເປັນຢູ່ ເຊື່ອມສານໂພສະນາການ.
- ຕິດຕາມການປະກາດ ແລະ ເປີດຊອງປະມູນໂຄງການຍ່ອຍບ້ວງທຶນຂອງທະນາຄານໂລກ ຮອບວຽນ 13.
- ກຽມເຂົ້າຮ່ວມການເປີດຊອງປະມູນໂຄງການຍ່ອຍ ຮອບວຽນທີ 13 ຢູ່ຂັ້ນເມືອງ, ແຂວງເຊກອງ ແລະ ອັດຕະປື.
- ຕິດຕາມຄວາມຄືບໜ້າໂຄງການຍ່ອຍ ບ້ວງທຶນທະນາຄານໂລກ ແລະ ທຶນລັດຖະບານ.

- <u>ວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ</u>

- ຕິດຕາມກວດກາການທ້ອນເງິນ, ການເກັບກູ້, ການປ່ອຍເງິນກູ້ໃຫ້ສະມາຊິກກຸ່ມ ກຊກ ທີ່ 4 ເມືອງໂຄງການເກົ່າ ແລະ ຕິດຕາມການທ້ອນເງິນ ແລະ ຝຶກອົບຮົມ ການຄຸ້ມຄອງບັນຊີ ໃນ 3 ເມືອງເປົ້າໝາຍໃໝ່.
- ຕິດຕາມກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ກິດຈະກຳທີ່ສ້າງລາຍຮັບປະເພດຕ່າງໆ.
- ກະກຽມເອກະສານຕ່າງໆ ດ້ານຂໍ້ແນະນຳໃນການສ້າງຕັ້ງ ສພກ ແລະ ຈັດຕັ້ງ ສພກ ໃນເຂດເປົ້າໝາຍໃໝ່ ຄື : ເມືອງ ທ່າປາງທອງ, ເມືອງ ຊຽງຄໍ້ ແລະ ເມືອງຫົວເມືອງ.
- ສືບຕໍ່ປຸງແຕ່ງອາຫານກາງເວັນໃນ 15 ສະໂມສອນໂພຊະນາການ ແລະ ສືບຕໍ່ໃຫ້ຄວາມຮູ້ດ້ານສຸຂະສຶກສາ ແລະ ໂພຊະນາສຶກສາ ໃນເຂດເມືອງເປົ້າໝາຍເກົ່າ.
- ສືບຕໍ່ຊຸກຍູ້ສິ່ງເສີມດ້ານການເຮັດສວນຄົວ ຂອງສະມາຊິກ ສະໂມສອນໂພຊະນາການ.
- ກະກຽມເອກະສານດ້ານ ໂພຊະນາສຶກສາ ແລະ ເອກະສານອື່ນໆ ທີ່ມີຄວາມຈຳເປັນ.

| <u>ຜູ້ອຳນວຍການບໍລິຫານ ທລຍ</u> | <u>ຫົວໜ້າພະແນກ ຕິດຕາມ-ປະເມີນຜົນ</u> | <u>ສັງລວມ ແລະ ລາຍງານ</u> |
|---|---|---|
| ດ.ພ.ທ.ສ ຜູ້ອຳນວຍການ ບໍລິຫານ ກອງທຶນຫລຸດຜ່ອນຄວາມທຸກຍາກ | | |
| ---------------------- | ---------------------- | ---------------------- |
| ບຸນກວ້າງ ສຸວັນນະພັນ<br>Bounkhouang SOUVANNAPHANH | ດຣ.ທັດທະຈັນ ພົມພັນທະວົງ | ສິດທິເດດ ກິ່ງວົງສາ |